ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ

ເລກທີ 167 /ອຄ.ກອກ

ນະຄອນຫລວງວຽງຈັນ, ວັນທີ 18 MAR 2011

## ບົດແນະນຳ

**ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ**

**ເຖິງ:** ທ່ານ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ.

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/ສພຊ, ລົງວັນທີ 3/4/99.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມອຸດສາຫະກຳ ສະບັບເລກທີ 2457/ອຄ.ຈພງ, ລົງວັນທີ 25/12/09.
- ອີງຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ສະບັບເລກທີ 2074/ອຄ, ລົງວັນທີ 19/10/10.

ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ສະບັບເລກທີ 2074/ອຄ, ລົງວັນທີ 19/10/2010 ໃຫ້ມີຄວາມເປັນເອກະພາບ ແລະ ຖືກຕ້ອງຕາມຈຸດປະສົງເປົ້າໝາຍຂອງການຄຸ້ມຄອງ ແລະ ສົ່ງເສີມໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ, ກົມອຸດສາຫະກຳ ອອກບົດແນະນຳ ຄືດັ່ງນີ້:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ ຈັດຕັ້ງປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ສະບັບເລກທີ 2074/ອຄ, ລົງວັນທີ 19/10/2010 ຢ່າງເຂັ້ມງວດ.
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຈັດຕັ້ງກອງປະຊຸມເຜີຍແຜ່ຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ໃຫ້ພະນັກງານໃນພະແນກຂອງຕົນ, ພາກສ່ວນທີ່ກ່ຽວຂ້ອງ ແລະ ເຈົ້າຂອງກິດຈະການໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ຮັບຊາບ.
3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ ສົມທົບກັບຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ລົງເກັບກຳຂໍ້ມູນບັນດາໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທັງໝົດພາຍໃນແຂວງຂອງຕົນ (ໂຮງງານທີ່ມີອະນຸຍາດດຳເນີນກິດຈະການ ແລະ ໂຮງງານທີ່ບໍ່ມີອະນຸຍາດ) ຕາມແບບຟອມທີ (1) ແລະ ສັງລວມເປັນບັນຊີໂຮງງານລະອຽດ ຕາມແບບຟອມທີ (2) ຂັດຕິດມາພ້ອມນີ້.
4. ມອບໃຫ້ພະແນກ ອ.ຄ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຄົ້ນຄວ້າຕົກລົງໃນການຈັດສົມໂຮງງານອຸດສາຫະກຳປຸງແຕ່ງເຫລັກ ຢູ່ພາຍໃນແຂວງ, ນະຄອນຫຼວງວຽງຈັນ ໂດຍສົມທົບກັບຫ້ອງວ່າການແຂວງ, ນະຄອນຫລວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງຕາມຄວາມເໝາະສົມ ໂດຍລົງກວດກາມາດຕະຖານຂອງໂຮງງານອຸດສາຫະກຳປຸງແຕ່ງເຫລັກທັງໝົດຢູ່ບັນຊີສັງລວມ ແບບຟອມທີ (2) ຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ເລກທີ 2074/ອຄ, ລົງວັນທີ 19/10/2010. ຫລັງຈາກນັ້ນໃຫ້ເຮັດບົດບັນທຶກການກວດກາ ເພື່ອຈັດສົມໂຮງງານເປັນລາຍລັກອັກສອນກັບເຈົ້າຂອງໂຮງງານ ຕາມແບບຟອມທີ (3).

5. ພາຍຫລັງທີ່ໄດ້ລົງກວດກາ ແລະ ເຮັດບົດບັນທຶກການກວດກາເພື່ອດັດສົມໂຮງງານອຸດສາຫະກຳປຸງແຕ່ງເຫລັກ ແລ້ວ, ໃຫ້ຈັດກອງປະຊຸມເພື່ອຄົ້ນຄວ້າ ແລະ ດັດສົມປັບດາໂຮງງານດັ່ງກ່າວ ໂດຍເຊີນເອົາພາກສ່ວນກ່ຽວຂ້ອງເຂົ້າຮ່ວມ (ຄະນະກຳມະການກວດກາ ແລະ ດັດສົມໂຮງງານ). ໃນນີ້, ການພິຈາລະນາ ໃຫ້ອີງໃສ່ມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງເຫລັກ ໂດຍສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

6. ໃຫ້ຂຶ້ນບັນຊີໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທີ່ໄດ້ຜ່ານການກວດກາ ແລະ ດັດສົມແລ້ວນັ້ນ ຕາມແບບຟອມທີ (6) ໂດຍແຍກອອກເປັນ 2 ກໍລະນີ ຄືດັ່ງນີ້:

   1). ໂຮງງານທີ່ມີໃບອະນຸຍາດດຳເນີນກິດຈະການໂຮງງານ:

   - ໂຮງງານທີ່ມີມາດຕະຖານຄົບຖ້ວນ ແມ່ນໃຫ້ສືບຕໍ່ດຳເນີນກິດຈະການໂຮງງານໄດ້ເປັນປົກກະຕິ.
   - ໂຮງງານທີ່ມີມາດຕະຖານບໍ່ຄົບຖ້ວນ ແມ່ນໃຫ້ປັບປຸງຄືນ ແລະ ເຈົ້າຂອງໂຮງງານຕ້ອງສ້າງແຜນລະອຽດເພື່ອປັບປຸງໂຮງງານຂອງຕົນ, ພ້ອມທັງເຮັດບົດບັນທຶກສັນຍາ ຕາມແບບຟອມທີ (4) ໂດຍໃຫ້ກຳນົດເວລາການປັບປຸງບໍ່ເກີນວັນທີ 31/10/2011.

   2). ໂຮງງານທີ່ບໍ່ມີໃບອະນຸຍາດດຳເນີນກິດຈະການໂຮງງານ:

   - ໂຮງງານທີ່ມີມາດຕະຖານບໍ່ຄົບຖ້ວນຕາມທີ່ກຳນົດໄວ້ ຕ້ອງຢຸດເຊົາຖາວອນ ແລະ ຕ້ອງເຮັດບົດບັນທຶກສັນຍາກັບເຈົ້າຂອງໂຮງງານເປັນລາຍລັກອັກສອນ ຕາມແບບຟອມທີ (4), ໃນກໍລະນີເຈົ້າຂອງໂຮງງານມີຈຸດປະສົງຢາກດຳເນີນກິດຈະການຕໍ່ ໃຫ້ປະຕິບັດຕາມຂໍ້ 8 ຂອງບົດແນະນຳສະບັບນີ້.
   - ໂຮງງານທີ່ມີມາດຕະຖານຄົບຖ້ວນຕາມທີ່ກຳນົດໄວ້ ຕ້ອງປະກອບເອກະສານຂໍອະນຸຍາດດຳເນີນກິດຈະການໂຮງງານຕາມຂັ້ນຕອນ, ພ້ອມທັງເຮັດບົດບັນທຶກສັນຍາກັບເຈົ້າຂອງໂຮງງານ ເປັນລາຍລັກອັກສອນຕາມແບບຟອມທີ (4) , ໂດຍກຳນົດເວລາບໍ່ເກີນວັນທີ 31/5/2011.

7. ໃຫ້ພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງເຫລັກ ທີ່ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນ ແລະ ຖືກຕ້ອງ, ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07.

8. ໂຮງງານອຸດສາຫະກຳປຸງແຕ່ງເຫລັກທີ່ຈະຂໍສ້າງຕັ້ງໃໝ່ ຕ້ອງໄດ້ຂໍອະນຸຍາດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ 30/7/07 ແລະ ຕ້ອງປະຕິບັດໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ທຸກປະການ.

9. ງົບປະມານໃນການລົງກວດກາ ແລະ ດັດສົມໂຮງງານອຸດສາຫະກຳປຸງແຕ່ງເຫລັກ ແມ່ນສະເໜີໃຫ້ນຳໃຊ້ງົບປະມານຂອງພະແນກ ອ.ຄ ແຂວງ, ນະຄອນຫລວງ ຕາມເງື່ອນໄຂເໝາະສົມ.

10. ໃຫ້ສະຫລຸບລາຍງານຜົນການກວດກາ ແລະ ດັດສົມໂຮງງານດັ່ງກ່າວ ຕາມແບບຟອມທີ (5) ແລ້ວສົ່ງໃຫ້ກົມອຸດສາຫະກຳ ຢ່າງຊ້າບໍ່ໃຫ້ກາຍວັນທີ 30/11/2011. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກມີຂໍ້ຫຍຸ້ງຍາກ ໃຫ້ລາຍງານຕໍ່ກົມອຸດສາຫະກຳ ຊາບເປັນແຕ່ລະໄລຍະ, ເພື່ອສະເໜີຂໍທິດຊີ້ນຳຈາກຂັ້ນເທິງ ແລະ ພ້ອມກັນແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມລະບຽບການ ຢ່າງເຂັ້ມງວດດ້ວຍ.

ຫົວໜ້າກົມອຸດສາຫະກຳ

ກົມອຸດສາຫະກຳ

ຫວ່າງ ພົມມະສັກ